ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານຮ່ວມພັດທະນາ ມະຫາຊົນ

ເລກທີ 163 /ທຄຮ
ນະຄອນຫຼວງວຽງຈັນ, ວັນທີ 16 ຕຸລາ 2025

# ມະຕິ

## ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ
## ສະໄໝສາມັນ ຄັ້ງທີ I ປະຈຳປີ 2025

- ອີງຕາມ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນຂອງບໍລິສັດຫຼັກຊັບ ແລະ ບໍລິສັດ ຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ລະບຽບວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018;
- ອີງຕາມ ກົດລະບຽບຂອງທະນາຄານຮ່ວມພັດທະນາ ມະຫາຊົນ ສະບັບເລກທີ 283/ທຄຮ, ລົງວັນທີ 16 ພຶດສະພາ 2025.

ຜ່ານການຄົ້ນຄວ້າ ແລະ ແລກປ່ຽນຄຳເຫັນຂອງບັນດາສະມາຊິກສະພາບໍລິຫານ ຢ່າງເລິກເຊິ່ງຕໍ່ກັບແຕ່ລະວາລະ ຂອງກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ (ທຄຮ) ສະໄໝສາມັນ ຄັ້ງທີ I ປະຈຳປີ 2025, ໃນ ຄັ້ງວັນທີ 16 ຕຸລາ 2025.

**ກອງປະຊຸມສະພາບໍລິຫານ ທະນາຄານຮ່ວມພັດທະນາ ມະຫາຊົນ ຕົກລົງ:**

**ມາດຕາ 1** ພາຍຫຼັງພິຈາລະນາແລ້ວ ເຫັນດີຮັບຮອງເປັນເອກະພາບກັນ ໃນກອງປະຊຸມສະພາບໍລິຫານ ທຄຮ ສະໄໝສາ ມັນ ຄັ້ງທີ I, ປະຈຳປີ 2025 ເຊິ່ງລາຍລະອຽດ ມີດັ່ງນີ້:

1) ເຫັນດີຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ຂອງ ທຄຮ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ທຄຮ ສະໄໝສາມັນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ;
2) ເຫັນດີຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ທຄຮ ເພື່ອນຳສະເໜີຕໍ່ກອງປະຊຸມຜູ້ຖືຮຸ້ນ ທຄຮ ສະໄໝສາມັນ ປະຈຳປີ 2024 ພິຈາລະນາ ແລະ ຮັບຮອງ:
   - ເງິນປັນຜົນ: 880 ກີບ/ຮຸ້ນ;
   - ຈຳນວນເງິນປັນຜົນທັງໝົດ: 660,000,000,000 ກີບ;
   - ມື້ປິດປຶ້ມທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ: 14 ພະຈິກ 2025;
   - ມື້ຈ່າຍເງິນປັນຜົນ: 25 ທັນວາ 2025;
3) ເຫັນດີຮັບຮອງ ແຕ່ງຕັ້ງຄະນະກຳມະການກວດກາກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງ;
4) ເຫັນດີຮັບຮອງ ແຜນຈັດກອງປະຊຸມຜູ້ຖືຮຸ້ນ ທະນາຄານຮ່ວມພັດທະນາ ມະຫາຊົນ ສະໄໝສາມັນ ປະຈຳປີ 2024, ເຊິ່ງລາຍລະອຽດ ມີດັ່ງນີ້:
   - ມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນ ເພື່ອກຳນົດສິດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ໄດ້ຮັບເງິນປັນຜົນ: 14 ພະຈິກ 2025;
   - ມື້ເປີດກອງປະຊຸມຜູ້ຖືຮຸ້ນ: 09 ທັນວາ 2025, ເວລາ: 9:00-12:00 ໂມງ;


ເລກທີ 82 ຖະໜົນ ລ້ານຊ້າງ ບ້ານຫັດສະດີ ເມືອງຈັນທະບຸລີ ນະຄອນຫຼວງວຽງຈັນ, 01000, ສປປ ລາວ ໂທ.(+856-21) 213531-6
ສາຍດ່ວນ: 1499, WEBSITE:WWW.JDBBANK.COM.LA; EMAIL:INFO@JDBBANK.COM.LA

- ສະຖານທີ່ຈັດກອງປະຊຸມຜູ້ຖືຮຸ້ນ: ທະນາຄານຮ່ວມພັດທະນາ ມະຫາຊົນ, ຊັ້ນ 6;
- ວາລະກອງປະຊຸມຜູ້ຖືຮຸ້ນ:
  - ວາລະທີ 1: ພິຈາລະນາ ແລະ ຮັບຮອງ ຜົນການດຳເນີນງານ ປະຈຳປີ 2024 ຂອງ ທຄຮ;
  - ວາລະທີ 2: ພິຈາລະນາ ແລະ ຮັບຮອງ ບົດລາຍງານຖານະການເງິນ ປະຈຳປີ 2024 ຂອງ ທຄຮ;
  - ວາລະທີ 3: ພິຈາລະນາ ແລະ ຮັບຮອງ ແຜນການຈ່າຍເງິນປັນຜົນ ປີ 2024 ຂອງ ທຄຮ.

**ມາດຕາ 2** ການຈັດຕັ້ງປະຕິບັດ

ມອບໃຫ້ຄະນະອຳນວຍການ ທຄຮ ຈັດຕັ້ງປະຕິບັດຕາມມະຕິກອງປະຊຸມ ສະບັບນີ້ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຢ່າງຕັ້ງໜ້າ ໃຫ້ໄດ້ຮັບຜົນດີ.

**ມາດຕາ 3** ມະຕິກອງປະຊຸມ ສະບັບນີ້ ມີຜົນສັກສິດນັບແຕ່ວັນທີ ບັນດາສະມາຊິກສະພາບໍລິຫານ ໄດ້ລົງລາຍເຊັນໃນຕາຕະລາງລາຍຊື່ຜູ້ເຂົ້າຮ່ວມກອງປະຊຸມສະພາບໍລິຫານ ທຄຮ ແລະ ທ່ານ ປະທານສະພາບໍລິຫານ ໄດ້ລົງລາຍເຊັນໃນມະຕິກອງປະຊຸມສະພາບໍລິຫານ ເປັນຕົ້ນໄປ.

**ປະທານກອງປະຊຸມ**

ທະນາຄານ ຮ่วมพัดทะนา ມະຫາຊົນ JOINT DEVELOPMENT BANK Public

**ພອນສະໄໝ ສຸຂະຜົນ**